ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ — ເລກທີ 2061/ຫກ

ຫ້ອງການ — ນະຄອນຫຼວງວຽງຈັນ ວັນທີ 24 NOV 2023

# ໜັງສືແຈ້ງເຊີນການປະມູນສົມທຽບລາຄາ

**ເຖິງ :** ບັນດາບໍລິສັດ, ຫ້າງຮ້ານ ແລະ ໂຮງພິມ ຕ່າງໆ.

**ເລື່ອງ:** ເຊີນເຂົ້າຮ່ວມຍື່ນຊອງປະມູນໃນໜ້າວຽກຈັດຊື້-ຈັດຈ້າງ ວັດຖຸອຸປະກອນ ແລະ ການບໍລິການ ວຽກງານຕ່າງໆ ຂອງກະຊວງການຕ່າງປະເທດ ປະຈຳປີ 2024.

- ອີງຕາມ ແຜນການຈັດຕັ້ງປະຕິບັດວຽກ ຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການຕ່າງປະເທດ ປະຈຳປີ 2024.

ຫ້ອງການ ກະຊວງການຕ່າງປະເທດ ຂໍຖືເປັນກຽດເຊີນມາຍັງບັນດາ ບໍລິສັດ, ຫ້າງຮ້ານ, ໂຮງພິມ ທີ່ມີຄວາມສົນໃຈ, ມີປະສົບການ ແລະ ມີຄວາມພ້ອມ ເຂົ້າຮ່ວມແຂ່ງຂັນການປະມູນລາຄາ ຊຶ່ງມີໜ້າວຽກດັ່ງນີ້:

1.ວຽກຈັດຊື້ເຄື່ອງໃຊ້ຫ້ອງການ;

2.ວຽກບໍລິການຄວາມປອດໄພ;

3.ວຽກບຳລຸງຮັກສາ ແລະ ສ້ອມແປງແອ;

4.ວຽກບໍລິການລົດໃຫ້ເຊົ່າ;

5.ວຽກຈັດເຊົ່າຈັດກອບປີ້, ເຄື່ອງພິມເຕີ, ເຄື່ອງໂທລະສານ;

6.ວຽກຈັດພິມຕ່າງໆ ຂອງກະຊວງການຕ່າງປະເທດ ປະຈຳປີ 2024.

ການປະມູນຈະໄດ້ດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດໃດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນ ທີ່ ພະແນກບໍລິຫານ, ຫ້ອງການກະຊວງການຕ່າງປະເທດ ຕັ້ງຢູ່ ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ ນັບແຕ່ວັນທີ 27 ພະຈິກ 2023, ຕາມໂມງລັດຖະການ ໂທ: 021 416 572, 020 22222587 ຂາຍຊອງປະມູນໃນລາຄາ 500.000 ກີບ/ຊອງ, ຈຳນວນເງິນຊື້ຊອງປະມູນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ.

ຊອງປະມູນຕ້ອງສົ່ງໃຫ້ພະແນກບໍລິຫານ, ຫ້ອງການກະຊວງການຕ່າງປະເທດ **ຊ້າສຸດບໍ່ໃຫ້ກາຍເວລາ 13:00 ໂມງ ຂອງວັນທີ 15 ທັນວາ 2023, ຊອງປະມູນຕ້ອງໃຫ້ບໍລິສັດ ຫຼື ແຕ່ງຕັ້ງຜູ້ຕາງໜ້າຂອງບໍລິສັດມາສົ່ງ, ທຸກຊອງປະມູນຈະໄດ້ເປີດໃນເວລາ 13:30 ໂມງ ຂອງວັນທີ 15 ທັນວາ 2023 ທີ່ຫ້ອງປະຊຸມຊັ້ນ** 03 **ຕຶກ** B **ກະຊວງການຕ່າງປະເທດ** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

ດັ່ງນັ້ນ, ຈຶ່ງແຈ້ງຮຽນເຊີນມາຍັງບັນດາທ່ານ ທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ອອນຄຳ ເຈື່ອນພະນິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ
ຫ້ອງການ

ເລກທີ 2062/ຫກ
ນະຄອນຫຼວງວຽງຈັນ,ວັນທີ: 24 NOV 2023

# ເງື່ອນໄຂ ແລະ ຄໍາແນະນໍາສໍາລັບຜູ້ເຂົ້າຮ່ວມການປະມູນສົມທຽບລາຄາ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້ -ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດ, ຫ້າງຮ້ານ ແລະ ໂຮງພິມ ຕ່າງໆ ທີ່ເຂົ້າຮ່ວມສົມທຽບລາຄາ ການຈັດຊື້-ຈັດຈ້າງ ວັດອຸປະກອນ ແລະ ການບໍລິການວຽກງານຕ່າງໆ ຂອງກະຊວງການຕ່າງປະເທດ ປະຈໍາປີ 2024, ໂດຍໜ້າວຽກແມ່ນລະບຸໄວ້ໃນໜັງສືແຈ້ງການເຊີນປະມູນສົມທຽບລາຄາ ສະບັບເລກທີ 2061/ຫກ, ລົງວັນທີ 24 NOV 2023, ໂດຍບໍລິສັດທີ່ເຂົ້າຮ່ວມຕ້ອງປະກອບເອກະສານຕ່າງໆຕາມເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ :</u>

1. ມີໃບທະບຽນວິສະຫະກິດ;
2. ມີໃບອະນຸຍາດດໍາເນີນທຸລະກິດ ທີ່ກ່ຽວຂ້ອງກັບວຽກທີ່ເຂົ້າປະມູນ ໂດຍໃຫ້ຖືກຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ຢັ້ງຢືນການຊໍາລະອາກອນ ປີ 2022 ຫຼື 2023;
4. ມູນຄ່າທີ່ສະເໜີມາຕ້ອງເປັນເງິນກີບ ໂດຍລວມພັນທະອາກອນຕ່າງໆຕາມລະບຽບທີ່ກົດໝາຍກໍານົດ;
5. ເປັນຮ້ານ ຫຼື ບໍລິສັດ ທີ່ມີຜົນງານບໍລິການ ທີ່ກ່ຽວຂ້ອງກັບວຽກທີ່ຈະປະມູນ ຢ່າງຕໍ່າ 03 ປີ ຂຶ້ນໄປ;
6. ມີໃບຢັ້ງຢືນຖານະການເງິນ ຫຼື ໃບຢັ້ງຢືນບັນຊີສໍາຮອງຈາກທະນາຄານ;
7. ມີເງິນຄໍ້າປະກັນຊອງປະມູນ 2% ຂອງມູນຄ່າທັງໝົດທີ່ສະເໜີການປະມູນ (ແບງກາລັງຕີ) ຫຼື ມີເອກະສານການຄໍ້າປະກັນດ້ວຍກຽດ (ມີຢູ່ໃນເອກະສານປະມູນ);
8. ລາຍການທີ່ສະເໜີລາຄາຕ້ອງລະບຸລາຍລະອຽດເປັນພາສາລາວ;
9. ຕ້ອງເປັນບໍລິສັດທີ່ບໍ່ຖືກຄະດີໃນ ສປປ ລາວ;
10. ຊອງປະມູນຕ້ອງແຍກເປັນແຕ່ລະລາຍການ.

ດັ່ງນັ້ນ, ຈຶ່ງໄດ້ກໍານົດເງື່ອນໄຂສະບັບນີ້ໄວ້ເພື່ອເປັນຫຼັກຖານ.

ແທນ ຫົວໜ້າຫ້ອງການ

ອອນຄໍາ ເຈື່ອງນະນີວົງ